# ບັດເລືອກຕັ້ງຂອງຊາວເອເຊັຍແລະເກາະປະຊິຟິກ **APIA** ທຸກໆບັດສຳຄັນທີ່ສຸດ!

## ທ່ານຮູ້ບໍວ່າ...

- ຊາວ APIA ມີຈຳນວນທັງໝົດ ໑໖ ລ້ານຄົນ ແລະປະກອບເປັນ ໕.໒ % ຂອງພົນເມືອງອາເມຣິກັນທັງໝົດ?
- ຢູ່ໃນທຸກໆພາກຂອງປະເທດອາເມຣິກາ ມີຊາວ APIA ອາໃສຢູ່ໝົດ?
- ຄາດກັນວ່າ ປະຊາກອນຊາວ APIA ຈະເຕີບໃຫຍ່ຂະຫຍາຍຕົວອອກເປັນສອງເທົ່າຕົວໃນປີ ໒໐໑໐ ແລະ ເປັນສາມເທົ່າຕົວພາຍໃຍປີ ໒໐໕໐?

**ຂນະທີ່ພົລເມືອງຊາວ APIA ໄດ້ຂະຫຍາຍຕົວອອກຢ່າງວອງໄວ ການຂະຫຍາຍຕົວທີ່ບົ່ມຊ້ອນດ້ານອອກສຽງປ່ອນບັດຍິ່ງສູງຂື້ນຢ່າງໃຫຍ່...**

- ຊາວ APIA ເປັນຂຸ່ມຊົນນຶ່ງໃນສະຫະຣັດອາເມຣິກາ **ທີ່ເຕີບໃຫຍ່ຂະຫຍາຍຕົວໄວທີ່ສຸດ.**
  - ແຕ່ວ່າຊາວ APIA ທີ່ເກີດຢູ່ນອກປະເທດອາເມຣິກາ ຍັງຄົງບໍ່ມີສິດລົງຄະແນນສຽງເລືອກຕັ້ງໄດ້ເທື່ອ ເພາະວ່າເຂົາເຈົ້າບໍ່ສາມາດປະຕິບັດຕາມຂໍ້ກຳນົດໃນການປ່ອນບັດເລືອກຕັ້ງໄດ້.
- ຢ່າງໃດກໍຕາມ ໗໐ % ຂອງຊາວເອເຊັຍຕ່າງດ້າວ ກໍດັດສັນຊາດເປັນຊາວອາເມຣິກັນແລ້ວ.
  - ຫາກເມື່ອໃດ ຊາວ APIA ໄດ້ໄປຈົດຊື່ປ່ອນບັດເລືອກຕັ້ງແລ້ວ ກໍມີທາງເປັນໄປໄດ້ຫລາຍທີ່ສຸດທີ່ເຂົາເຈົາຈະໄປຍັງບ່ອນປ່ອນບັດເລືອກຕັ້ງ**ໃນວັນເລືອກຕັ້ງ.**

---

## ເປັນຫຍັງຂ້ອຍຈຶ່ງໄປປ່ອນບັດເລືອກຕັ້ງ?

**ການໄປປ່ອນບັດເລືອກຕັ້ງຂອງຊາວ APIA ແມ່ນສຳຄັນຫລາຍທີ່ສຸດ!**

- ການອອກສຽງປ່ອນບັດຂອງຊາວເອເຊັຍປະຊິຟິກ ສແດງໃຫ້ເຫັນມາແລ້ວວ່າ ເຂົາເຈົ້າຈະສນັບສນູນແຕ່ຜູ້ຈະມາຊ່ວຍແກ້ໄຂບັນຫາຂອງເຂົາເຈົ້າເທົ່ານັ້ນ.
- ການເລືອກຕັ້ງໃນປີ ໒໐໐໐ ຈຳນວນພົລເມືອງຊາວ APIA ທີ່ທຳການເລືອກຕັ້ງ ແມ່ນລື່ນສ່ວນເກີນຂອງຈຳນວນຂອງການເລືອກຕັ້ງໂດຍຜູ້ແທນຣັດຢູ່ໃນເກົ້າຣັດ.

**ໃນການເລືອກຕັ້ງເມື່ອປີ ໒໐໐໐:**

- ຊາວ APIA ຈຳນວນ ໕ ລ້ານ ໒ ແສນ ຄົນ ມີສິດປ່ອນບັດເລືອກຕັ້ງ.
- ຈຳນວນຫລາຍກວ່າ ໒ ລ້ານ ໕ ແສນ ໄດ້ໄປຈົດທະບຽນເພື່ອປ່ອນບັດເລືອກຕັ້ງ.
- ແລະ ຈຳນວນເກືອບ ໒ ລ້ານຄົນເທົ່ານັ້ນໄດ້ໄປປ່ອນບັດແທ້ໆ.

**ຊາວເອເຊັຍປະຊິຟິກ ຍັງຈະຕ້ອງໄດ້ປັບປຸງແກ້ໄຂກັນຕື່ມອີກຢູ່.**

| ຣັດ | ຈຳນວນບັດເລືອກຕັ້ງທີ່ຊີ້ຂາດໄຊຊະນະໃນປີ໒໐໐໐ | ຈຳນວນຊາວ APIA ທີ່ມີສິດປ່ອນບັດ |
|---|---|---|
| ນິວແມກຊິໂກ | 366 | 14,000 |
| ຟລໍຣິດາ | 537 | 163,000 |
| ອາຍໂອວາ | 4,000 | 16,000 |
| ວິສຄັນຊິນ | 5,700 | 32,000 |
| ອໍເຣເກິນ | 6,800 | 65,000 |
| ເນວາດາ | 22,000 | 66,000 |
| ຮາວາຍ | 67,000 | 636,000 |
| ວໍຊິງຕັນ | 139,000 | 214,000 |
| ແຄລີຟໍເນຍ | ໑ ລ້ານ ໖ ແສນ | 2 ລ້ານ ໒ ແສນ |

---

## ຂ້ອຍຈະປ່ອນບັດເລືອກຕັ້ງໄດ້ແນ່ວໃດ?

**ຂ້ອຍຕ້ອງມີຄຸນສົມບັດຫຍັງແດ່ສຳລັບການປ່ອນບັດເລືອກຕັ້ງຂັ້ນປະເທດນັ້ນ?**

— ທ່ານຕ້ອງມີອາຍຸ ໑໘ ປີ, ມີສັນຊາດອາເມຣິກັນ, ແລະ ໄດ້ໄປລົງທະບຽນໄວ້ຮຽບຮ້ອຍແລ້ວ.

**ຂ້ອຍໄປລົງທະບຽນແບບໃດ?**

- ທ່ານສາມາດລົງທະບຽນທາງອິນເຕີແນດກໍໄດ້ ໒ ທາງ ແລະ ບໍ່ຕົກເຮັ່ງອີກດ້ວຍ ໂດຍເປີດ web site: www.APIAVote.org
- ຫລືໃຊ້ຟອມທີ່ໄຂເອົາຢູ່ http:www.fec.gov/votrregis/pdf/nvra.pdf.

**ເວລາທ່ານກອກຟອມຮຽບຮ້ອຍແລ້ວ ຢ່າລືມສົ່ງໄປທາງໄປສນີຕາມທີ່ຢູ່ນັ້ນໂລດ!**

— ທາງການຈະສົ່ງໃບແຈ້ງເຖິງສະຖານທີ່ປ່ອນບັດໃຫ້ທ່ານຊາບຕາມເວລາອັນຄວນ. ກຳນົດວັນປິດລົງທະບຽນ ສ່ວນຫລາຍ ແມ່ນ ໓໐ ມື້ກ່ອນວັນປ່ອນບັດເລືອກຕັ້ງ, ໃນຣັດເວີຈີເນັຽ ແມ່ນ ໒໗ ມື້.

**ຖ້າວ່າ ພາສາອັງກິດຂ້ອຍບໍ່ໄດ້ດີ** *ຂ້ອຍກໍສາມາດລົງທະບຽນປ່ອນບັດເລືອກຕັ້ງໄດ້ບໍ່?*

— ຢູ່ໃນຫລາຍໆຣັດ ກົດໝາຍກຳນົດໃຫ້ທາງການອຳນວຍຄວາມຊ່ວຍເຫລືອດ້ານພາສາໃຫ້ແກ່ຜູ້ໄປປ່ອນບັດເລືອກຕັ້ງທີ່ບໍ່ຮູ້ພາສາອັງກິດດີ, ອັນມີໂຮມທັງເອກສານຕ່າງໆກ່ຽວກັບການເລືອກຕັ້ງເຊັ່ນຂໍ້ມູນກ່ຽວກັບຜູ້ສມັກເລືອກຕັ້ງ ໃບລົງທະບຽນ ເປັນຕົ້ນ. ກະຣຸນາສອບຖາມນຳຫ້ອງການເລືອກຕັ້ງໃນຄຸ້ມຂອງທ່ານ ຫລື ນຳອົງການ APIAVote ດ້ານເລືອກຕັ້ງ ກ່ຽວກັບວ່າ ເຂດຂອງທ່ານມີການອຳນວຍຄວາມສະດວກດ້ານພາສາໃຫ້ຜູ້ບໍ່ໄດ້ພາສາອັງກິດດີນັ້ນຫລືບໍ່.

---

**ສຽງເລືອກຕັ້ງຂອງທ່ານປ່ຽນແປງສະພາບການປະຈຸບັນໄດ້ - ຈົ່ງໄປອອກສຽງປ່ອນບັດເລືອກຕັ້ງໃຫ້ໄດ້!**

ເຊີນເບິ່ງຂໍ້ມູນຕື່ມທີ່: info@apiavote.org - www.APIAVote.org – ຫລືໂທໄປຍັງເບີ: **1-888-API-VOTE**